# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 31 ທັນວາ 2006 ( 12-31-2006 )

---

## ຄວາມລອດພົ້ນສຳລັບທຸກຄົນ:

**ຂໍ້ພຣະຄັມພີໃນບົດຮຽນ:** ລູກາ 2:25-38

**ຄວາມຈິງໃນພຣະຄັມພີ:** ຂອງຂວັນຂອງພຣະເຈົ້າເຣື່ອງຄວາມລອດພົ້ນແມ່ນມີໄວ້ສຳລັບທຸກ ໆ ຄົນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂື້ນເພື່ອຊ່ອຍທ່ານໃຫ້ມີປະສົບການຊີວິດ ທີ່ມີການສັບປ່ຽນພອນສວັນຂອງ ພຣະເຈົ້າໂດຍ:

- ການສັງເກດຮູ້ວ່າຄວາມລອດພົ້ນໃນພຣະເຢຊູແມ່ນມີໄວ້ສຳລັບທຸກຄົນ ແລະ
- ການຕັດສິນໃຈເດັດຂາດທີ່ຈະສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບຄວາມລອດພົ້ນນີ້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## ບົດນຳ:

1. ທົບທວນເຣື່ອງຂອງຂວັນຂອງຄວາມເຊື່ອທີ່ເຮົາໄດ້ຮຽນຜ່ານມາເຊັ່ນ: ຄວາມຫວັງ, ຄວາມຮັກ, ພຣະເຢຊູ, ຂອງຂວັນທີ່ຈະຮຽນໃນມື້ນີ້ແມ່ນ " **ຄວາມລອດພົ້ນສຳລັບທຸກຄົນ** ".

- ເຮັດກ່ອງຂອງຂວັນອັນນຶ່ງ ແລ້ວຂຽນ " **ຄວາມລອດພົ້ນ** " ໃສ່, ເອົາກ່ອງຂອງຂວັນນີ້ໃຫ້ນັກຮຽນຜູ້ນຶ່ງອ່ານ ແລະສົ່ງຕໍ່ ໆ ກັນໄປຈົນຄົບໝົດທຸກຄົນ, ຫລັງຈາກນັ້ນກໍມາສົນທະນາກັບນັກຮຽນໃນເຣື່ອງຄວາມແຕກຕ່າງລະຫວ່າງການຍອມຮັບຂອງຂວັນ ທີ່ທຳງານໃນຊີວິດ ກັບຂອງຂວັນທີ່ເຫັນດ້ວຍຕາ.

**ຄຳຖາມ:** ເຮົາຈະເປີດຂອງຂວັນຂອງຄວາມລອດພົ້ນຂອງພຣະເຈົ້າໃຫ້ກັບທຸກ ໆ ຄົນແນວໃດ?

## 1. <u>ການສັງເກດຮູ້ທາງຂອງພຣະເຈົ້າໃນຄວາມລອດພົ້ນບາບ:</u> ( ລູກາ 2:25-32 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ລູກາ 2:25-32 (ສລູບຄວາມໂດຍຫຍໍ້ ເພື່ອໃຫ້ໄດ້ລາຍລະອຽດ ໃນພຣະຄໍາທີ່ໄດ້ອ່ານມານີ້. ໃຊ້ການປຽບທຽບເພື່ອໃຫ້ເຫັນຄວາມແຕກຕ່າງ ໃນການລໍຖ້າຜູ້ຈະມາໂຜດ ໂລກ ກັບຫົນທາງແຫ່ງຄວາມສໍາເຣັດຂອງພຣະເຢຊູຄຣິດໃນບົດບາດຂອງພຣະເມສີອາ.

2) **ຄໍາຖາມ:** 1) ມີຄົນໄດ້ຮັບຄວາມຜິດຫວັງກັບການມາບັງເກີດມາເປັນເບບີ້ຂອງພຣະເມສີອາຢູ່ບໍ?
2) ທ່ານເຄີຍເສັຽໃຈກັບສິ່ງທີ່ພຣະເຈົ້າປະທານໃຫ້ທ່ານບໍ?
3) ໃຫ້ຫວນເບິ່ງຄືນຫລັງເບິ່ງສິ່ງທີ່ທ່ານໄດ້ປະສົບມານັ້ນວ່າ ມີຫຍັງແດ່ທີ່ທ່ານໄດ້ຮຽນຈາກປະສົບ ການນັ້ນ?

3) **ອະທິບາຍ:** ໃຫ້ນັກຮຽນອາສາສມັກອ່ານພຣະທັມ ລູກາ 2:26-32 ດ້ວຍການໃຊ້ສຽງໜັກແໜ້ນທີ່ບົ່ງບອກ ໃນການສັງເກດທີ່ສໍາຄັນໃນຄວາມລອດພົ້ນຂອງພຣະເຈົ້າໃຫ້ທຸກຄົນໄດ້ຍິນ.

4) **ຄໍາຖາມ:** - ຖ້າທ່ານຊີເມໂອນບໍ່ໄດ້ບອກ ວ່າ ພຣະເຢຊູແມ່ນໃຜແລ້ວຈະເປັນຢ່າງໃດ?
- ພວກເຮົາເຮັດຢ່າງໃດເພື່ອຈະຍອມຮັບແຜນການຂອງພຣະເຈົ້າໃນເຣື່ອງພຣະເຢຊູຄຣິດ ໃຫ້ຫລາຍຂຶ້ນ?
- ເຮົາຈະເຮັດວິທີໃດເພື່ອຊ່ອຍເຫລືອຊຶ່ງກັນແລະກັນໃຫ້ຍອມຮັບພຣະເຢຊູຫລາຍຂຶ້ນ?
- ມີຫຍັງແດ່ທີ່ເຮົາຄວນປະກາດເຣື່ອງຄວາມລອດພົ້ນຂອງພຣະເຈົ້າໃຫ້ທຸກໆ ຄົນຮູ້?
- ໃນຊີວິດຂອງທ່ານມີຫຍັງແດ່ທີ່ທ່ານຈະຕ້ອງປ່ຽນແປງ?
- ທ່ານຈະສະແດງໃຫ້ເຫັນວ່າພຣະເຈົ້າຊ່ອຍເຫລືອ ແລະປ່ຽນແປງຊີວິດວິດຂອງທ່ານແນວໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນ:** ລູກາ 2:25-32

1. ແມ່ນຫຍັງເປັນຄວາມສັມພັນອັນຖືກຕ້ອງລະຫວ່າງ ການເຝົ້າດ່ຽວຂອງຊີເມໂອນ ແລະການປອບໃຈຄົນ ອິສຣາເອລທີ່ລາວໄດ້ທໍາ?
2. ພຣະວິນຍານບໍຣິສຸດໄດ້ເປີດເຜີຍພຣະເຢຊູໃຫ້ລາວໃນທາງໃດກ່ອນ?
3. ໃນການສັຣເສີນພຣະເຈົ້າຂອງລາວໄດ້ສະແດງເຖິງທາງແຫ່ງຄວາມລອດພົ້ນຂອງພຣະອົງຢູ່ບໍ?
4. ພຣະເຢຊູຄຣິດເປັນແສງສະຫວ່າງສໍາລັບຄົນຕ່າງຊາດ ແລະຄົນອິສຣາເອລແນວໃດ?

## 2. <u>ຈັບເອົາຣັສມີແຫ່ງຄວາມລອດພົ້ນຂອງພຣະເຈົ້າ:</u> ( ລູກາ 2:33-35 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ລູກາ 2:33-35
2) ໃຫ້ນັກຮຽນຂີດວົງມົນອ້ອມສິ່ງທີ່ເຂົາໄດ້ຮຽນໃນບົດຮຽນນີ້ ໃນຂໍ້ຄວາມຫລືປໂຍກທີ່ເຮັດໃຫ້ຮູ້ເຖິງອິດທິພົນໃນ ການພົບເບບີ້ເຢຊູ ວ່າ: (ເປັນຄວາມຕື່ນເຕັ້ນ, ເປັນຄວາມປລາດໃຈ,ເປັນຄວາມເຈັບປວດ)
- ຂໍ້ທີ 29-32 ສະແດງໃຫ້ເຫັນວ່າທ່ານຊີເມໂອນໄດ້ສັຣເສີນພຣະເຈົ້າສໍາລັບພຣະເມສີອາ ເພາະວ່າທ່ານຊີເມໂອນ ເປັນຄົນສິລທັມແລະຮັກພຣະເຈົ້າຫລາຍທີ່ສຸດ, ທ່ານເປັນຄົນທີ່ຍອມຮັບແລະຈື່ຈໍາໃນຄວາມລອດພົ້ນຂອງພຣະເຈົ້າ.
- ທ່ານຊີເມໂອນໄດ້ຄວ້າເອົາຣັສມີຄວາມລອດພົ້ນຂອງພຣະເຈົ້າດ້ວຍຄວາມຊອບທັມ ແລະດ້ວຍຄວາມສັດທາ.
- ພວກເຮົາກໍສາມາດຄວ້າຈັບເອົາຣັສມີແຫ່ງຄວາມລອດພົ້ນຂອງພຣະເຈົ້າດ້ວຍຄວາມຊອບທັມແລະດ້ວຍຄວາມ ສັດທາຂອງພວກເຮົາໄດ້ເຊັ່ນກັນ. **ຄໍາຖາມ:** ມີຫຍັງແດ່ທີ່ເຮົາສາມາດຮຽນຈາກທ່ານຊີເມໂອນ?

3) **ອະທິບາຍ:** ຊ່ອຍກັນ ຕີຄວາມໝາຍທີ່ວ່າມີຫລາຍຄົນໃນອິສຣາເອລລົ້ມລົງ ແລະລຸກຂຶ້ນໃໝ່ ( ຂໍ້ 34 ) **ຄໍາຖາມ:** ທ່ານຈະບອກລັກສະນະໃນການລົ້ມລົງ ແລະລຸກຂຶ້ນ ນີ້ມີໝາຍຄວາມວ່າແນວໃດ? ( ຍອມຮັບ ຫລື ປະຕິສດພຣະ ເຢຊູ ) ເປັນຫຍັງພຣະເຢຊູຈຶ່ງມີຣັສມີອັນແຮງກ້າ?
- ຈະຮັບເອົາພຣະເຢຊູ ຫລື ຈະປະຕິເສດພຣະເຢຊູ ແຕ່ພຣະອົງຍັງຊົງເປັນຜູ້ກາງຢູ່ສເມີ.
- ພຣະຄໍາຂອງພຣະເຈົ້ານໍາພາເຮົາໃຫ້ເຂົ້າໃຈເຖິງຄວາມລອດພົ້ນ ແລະພຣະອົງຊົງມີພຣະປະສົງ ໃຫ້ເຮົາຮັບເອົາ

ທາງພຣະເຢຊູຄຣິດເທົ່ານັ້ນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ລູກາ 2:33-35

1. ແມ່ນໃຜເຮັດໃຫ້ທ່ານຊີເມໂອນຄວ້າຈັບເອົາຣັສມີຄວາມລອດພົ້ນຂອງພຣະເຈົ້າ?
2. ຄຳຖແລງການຂອງທ່ານຊີເມໂອນທີ່ວ່າ: " ກຸມມານນີ້ຊົງຕັ້ງໄວ້ເປັນເຫດໃຫ້ຫລາຍຄົນໃນພວກອິສຣາເອລລົ້ມລົງ ແລະລຸກຂຶ້ນໃໝ່, ເຣື່ອງນີ້ຍັງເປັນຄວາມຈິງໃຫ້ເຮົາເຫັນຢູ່ບໍ?

**3. <u>ສະແດງອອກເຖິງຄວາມຮູ້ບຸນຄຸນສຳລັບຄວາມລອດພົ້ນຂອງພຣະເຈົ້າ:</u>** ( ລູກາ 2:36-38 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 2:36-38

2) ໃຫ້ນັກຮຽນເວົ້າເຣື່ອງຄວາມຮູ້ສຶກໃນການໄດ້ຍິນເຣື່ອງນາງອານາ ຫລື ການເຫັນທ່ານລູກາເປັນພະຍານເຣື່ອງ ການສັຣເສີນພຣະເຈົ້າຂອງນາງ. **ຖາມ:** ພວກເຮົາໄດ້ມີຄວາມກະຕືລືລົ້ນໃນການສັຣເສີນພຣະເຈົ້າຄືກັນກັບນາງ ອານາຫລືບໍ່?

- ເຮົາໄດ້ສະແດງຄວາມກະຕັນຍູທີ່ດີທີ່ສຸດຕໍ່ຄວາມລອດພົ້ນຂອງພຣະເຈົ້າແລ້ວຫລືຍັງ?
- ອີງຕາມຂໍ້ 36-37, ນາງອານາບໍ່ໄດ້ແມ່ນຄົນໜຸ່ມ- ນາງມີອາຍຸປະມານ 84 ປີແລ້ວ ແລະລາວກໍອາດຈະບໍ່ຍືນເຖິງ 100. ຄຳຖາມທີ່ໜ້າພິຈາຣະນາສຳລັບເຮົາທຸກຄົນນັ້ນຄື: ພຣະເຈົ້າມີຫຍັງໃຫ້ຂ້າພຣະອົງເຮັດແດ່ໃນຂະນະທີ່ຂ້າ ພຣະອົງຍັງມີຊີວິດເຫລືອຢູ່ນີ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ລູກາ 2:36-38

1. ໃນເມື່ອທ່ານອ່ານ ເຣື່ອງຂອງນາງ ອານາ ແລ້ວມີຫຍັງເຂົ້າມາໃນສມອງ (ຄວາມຄິດ)ຂອງທ່ານ?
2. ທ່ານພ້ອມທີ່ຈະສະແດງໃຫ້ເຫັນຄວາມກະຕັນຍູຕໍ່ຄວາມລອດພົ້ນຂອງພຣະເຈົ້າແລ້ວບໍ?
3. ທ່ານຈະໃຫ້ການປະສົບການຄວາມລອດພົ້ນ ແລະການຮູ້ຈັກພຣະເຢຊູວ່າ ພຣະອົງເປັນພຣະຜູ້ໄຖ່ແຜ່ຂຍາຍໄປເຖິງ ຄົນອື່ນໄດ້ຢ່າງໃດ?
4. ທ່ານຮູ້ໃຜແດ່ທີ່ຕ້ອງການພຣະເຢຊູຄຣິດ?
5. ໃນປີ 2007 ນີ້ທ່ານຈະນຳໃຜມາຫາພຣະເຈົ້າ ແລະຈະເປັນພະຍານເຣື່ອງພຣະເຈົ້າໃຫ້ໃຜ?

**<u>ສລູບ:</u>**

1. ໜູນໃຈໃຫ້ນັກຮຽນນຳເອົາຂອງຂວັນ 5 ຢ່າງທີ່ໄດ້ຮຽນໃນຣະດູນີ້ຄື: ຄວາມເຊື່ອ, ຄວາມຫວັງ, ຄວາມຮັກ, ພຣະ ເຢຊູຄຣິດ ແລະຄວາມຣອດພົ້ນທີ່ຮຽນມື້ນີ້ ໄປຄິດພິຈາຣະນາເບິ່ງແຕ່ລະຂອງຂວັນໄດ້ສ່ອງຣັສມີເຖິງຊີວິດຂອງ ພວກເຮົາຢ່າງໃດແດ່?
2. ດຳເນີນໃນການອະທິຖານ, ຊອກຫາການຊົງນຳຂອງພຣະເຈົ້າ, ມາສັຣເສີນນະມັສການພຣະເຈົ້າເປັນພະຍານເຣື່ອງ ພຣະເຢຊູຄຣິດເຈົ້າ ແລະ ຮັບໃຊ້ພຣະເຈົ້າ,ຊ່ອຍເຫລືອຊຶ່ງກັນແລະກັນໃນປີໃໝ່ນີ້.
3. ໜູນໃຈນັກຮຽນໃຫ້ອຸທິດຕົນ ຫລື ຕັດສິນໃຈຢ່າງຈິງໃຈຕໍ່ຄຳຖາມທີ່ວ່າ: ພຣະເຈົ້າມີພຣະປະສົງໃຫ້ພວກເຮົາດຳເນີນ ຊີວິດໃນປີໃໝ່ນີ້? " ສະບາຍດີປີໃໝ່ 2007 "

ລາວຊາວເທີນບັບຕິສສັມພັນ: ແປແລະຮຽບຮຽງໂດຍ: J.H.